ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ສະພາບໍລິຫານ
ຫ້ອງການກອງທຶນປົກປັກຮັກສາສິ່ງແວດລ້ອມ ເລກທີ /
ສພ.ຫກປສ

ນະຄອນຫຼວງວຽງຈັນ, ວັນທີ ມີນາ 2017

ໜັງສືເຊີນເຂົ້າຮ່ວມການປະມູນສົມທຽບລາຄາ

ເຖິງ: ບໍລິສັດ/ຮ້ານຈຳໜ່າຍ ອຸປະກອນໄອທີ

1. ຫ້ອງການກອງທຶນປົກປັກຮັກສາສິ່ງແວດລ້ອມ (ຫກປສ) ໄດ້ຮັບອະນຸມັດງົບປະມານຈຳສົກປີ 2017 ຈາກ ທະນາຄານໂລກ ເພື່ອຈັດຕັ້ງປະຕິບັດ ໂຄງການສິ່ງແວດລ້ອມ ແລະ ສັງຄົມໄລຍະ 2. ຫກປສ ມີຄວາມປະສົງ ນຳໃຊ້ງົບປະມານສ່ວນໜຶ່ງ ດຳເນີນການປະມູນຈັດຊື້ ອຸປະກອນໄອທີ ແລະ ບໍລິການທີ່ກ່ຽວພັນ ດ້ວຍການ ສະເໜີໃຫ້ຍື່ນການສົມທຽບລາຄາ.

2. ຫ້ອງການກອງທຶນປົກປັກຮັກສາສິ່ງແວດລ້ອມ ຂໍເຊີນ ບໍລິສັດ ຂອງທ່ານເຂົ້າຍື່ນຊອງສົມທຽບລາຄາ ສຳລັບ ການສະໜອງ ອຸປະກອນໄອທີ ແລະ ບໍລິການທີ່ກ່ຽວພັນ, ໄລຍະເວລາ ໃນການສົ່ງມອບແມ່ນ 30 ວັນ.

3. ການປະມູນນີ້ ຈະດຳເນີນຕາມຂັ້ນຕອນການປະມູນສົມທຽບລາຄາ ທີ່ໄດ້ກຳນົດໄວ້ຢູ່ໃນດຳລັດວ່າດ້ວຍການ ປະມູນຈັດຊື້ສິນຄ້າ, ການກໍ່ສ້າງສ້ອມແປງ ແລະ ການບໍລິການ ດ້ວຍທຶນຂອງລັດ, ສະບັບເລກທີ 03/ນຍ, ລົງວັນທີ 9 ມັງກອນ 2004 ແລະ ລະບຽບການຈັດຕັ້ງປະຕິບັດ ດຳລັດ, ສະບັບເລກທີ 063/ກງ, ລົງວັນທີ 12 ມີນາ 2004 ແລະ ລະບຽບການຈັດຕັ້ງປະຕິບັດດຳລັດ, ສະບັບເລກທີ 063/ກງ, ລົງວັນທີ 12 ມີນາ 2004 ແລະ ສະບັບດັດແກ້ເລກທີ 0861/ກງ, ລົງວັນທີ 05 ພຶດສະພາ 2009.

4. ຊອງສະເໜີລາຄາ ຈະຕ້ອງສົ່ງກ່ອນ ເວລາ 10:00 ໂມງຕອນເຊົ້າ ຂອງວັນທີ 16 ມີນາ 2017 ຢູ່ທີ່ຫ້ອງ ການ ກອງທຶນປົກປັກຮັກສາສິ່ງແວດລ້ອມ, ເຂດນາໄຮ່ດຽວ, ຕຶກ ກຊສ 100, ຊັ້ນ 2, ນະຄອນຫຼວງວຽງ ຈັນ, ໂທ : 021 252 739, ແຟກ: 021 252 741.

ຫ້ອງການກອງທຶນປົກປັກຮັກສາສິ່ງແວດລ້ອມ

ມວດທີ 1: ຄຳແນະນຳສຳລັບຜູ້ສະຫນອງສິນຄ້າ

1. ຫ້ອງການກອງທຶນປົກປັກຮັກສາສິ່ງແວດລ້ອມ (ຫກປສ) ໄດ້ຮັບອະນຸມັດງົບປະມານຈຳສົກປີ 2017 ຈາກ ທະນາຄານໂລກ ເພື່ອຈັດຕັ້ງປະຕິບັດ ໂຄງການ ສິ່ງແວດລ້ອມ ແລະ ສັງຄົມໄລຍະ 2. ຫກປສ ມີຄວາມປະ ສົງ ນຳໃຊ້ງົບປະມານສ່ວນໜຶ່ງ ດຳເນີນການປະມູນຈັດຊື້ ອຸປະກອນໄອທີ ແລະ ບໍລິການທີ່ກ່ຽວພັນ ດ້ວຍ ການສະເໜີໃຫ້ຍື່ນການສົມທຽບລາຄາ. ຜູ້ສະຫນອງສິນຄ້າທີ່ໄດ້ຮັບຮອງເອົາເປັນຜູ້ຊະນະການປະມູນ ຈະ ຕ້ອງໄດ້ສົ່ງມອບສິນຄ້າພາຍໃນກຳນົດເວລາຕາມທີ່ລະບຸໄວ້ຢູ່ໃນຂໍ້ທີ 6 ຂອງເງື່ອນ ໄຂຂອງສັນຍາ.
2. ຄວາມເຫມາະສົມຂອງຜູ້ສະຫນອງສິນຄ້າ: ຜູ້ສະຫນອງສິນຄ້າ ຕ້ອງໄດ້ສະຫນອງຂໍ້ມູນທີ່ກຳນົດໄວ້ຢູ່ໃນ ຫມວດທີ 2: ຂໍ້ມູນກ່ຽວກັບ ຜູ້ສະຫນອງສິນຄ້າ.
3. ການສໍ້ໂກງ ແລະ ການສໍ້ລາດບັງຫລວງ:

   3.1. ລັດຖະບານ ຮຽກຮ້ອງໃຫ້ຜູ້ຈັດຊື້, ຜູ້ເຂົ້າແຂ່ງຂັນປະມູນ ຫລື ຜູ້ສະຫນອງສິນຄ້າ, ຕ້ອງປະຕິບັດ ຕາມລະບຽບກົດໝາຍ ຢ່າງເຂັ້ມງວດໃນການຈັດຕັ້ງປະຕິບັດການປະມູນຈັດຊື້ ແລະ ຈັດຕັ້ງປະຕິບັດສັນຍາ ໃຫ້ຖືກຕ້ອງຕາມ ລະບຽບ ລາຍຈ່າຍງົບປະມານຂອງລັດ.

   3.2. ໂດຍປະຕິບັດຕາມລະບຽບກົດໝາຍ ຫາກມີຜູ້ເຂົ້າແຂ່ງຂັນລະເມີດ ຜູ້ຈັດຊື້ຕ້ອງໄດ້ປະຕິບັດດັ່ງນີ້:

   ກ). ຕັດຜູ້ເຂົ້າແຂ່ງຂັນປະມູນນັ້ນອອກຈາກການແຂ່ງຂັນ ປະມູນດັ່ງກ່າວ ຫລື ບໍ່ຮັບຮອງເອົາເປັນ ຜູ້ຊະ-ນະການປະມູນ;

   ຂ). ຖ້າຫາກວ່າ ຜູ້ເຂົ້າແຂ່ງຂັນປະມູນນັ້ນ ຖືກຕັດສິນວ່າ ມີການກະທຳທີ່ພົວພັນກັບການສໍ້ລາດ ບັງ ຫລວງ ຫລື ການສໍ້ໂກງ, ການສົມຮູ້ຮ່ວມຄິດ ຫລື ການບີບບັງຄັບ ໃນການແຂ່ງຂັນປະມູນ ຫລື ມີການ ກະທຳ ເພື່ອໃຫ້ຕົນເອງໄດ້ຮັບສັນຍາ. ຜູ້ເຂົ້າແຂ່ງຂັນປະມູນ ນັ້ນຈະຖືກປະກາດແຈ້ງການວ່າ ເປັນຜູ້ທີ່ບໍ່ມີ ຄວາມເຫມາະສົມ ພ້ອມທັງກຳນົດ ຫຼື ລະບຸເວລາທີ່ຖືກ ຫ້າມບໍ່ໃຫ້ ເຂົ້າຮ່ວມແຂ່ງຂັນປະມູນໃນການປະມູນ ຈັດຊື້ຂອງລັດ.

   3.3. ການກະທຳທີ່ພົວພັນການສໍ້ລາດບັງຫລວງ, ການສໍ້ໂກງ, ການສົມຮູ້ຮ່ວມຄິດ ຫລື ການບີບບັງຄັບ ໃນທຸກໆຮູບແບບທີ່ ໄດ້ກຳນົດໄວ້ຢູ່ໃນຂໍ້ທີ 3.4 ໂດຍທີ່ຜູ້ຈັດຊື້ ສາມາດຮູ້ເຫັນ ໄດ້ນັ້ນ. ຜູ້ຈັດຊື້ ຕ້ອງໄດ້ ດຳເນີນການແຕ່ຫົວທີໂລດກັບຜູ້ເຂົ້າແຂ່ງຂັນປະມູນນັ້ນ, ດ້ວຍການເຊີນເອົາ ຜູ້ເຂົ້າແຂ່ງຂັນ ປະມູນນັ້ນເຂົ້າ ມາອະທິບາຍ ແລະ ຊີ້ແຈງຕໍ່ຜູ້ຈັດຊື້. ຜູ້ຈັດຊື້ຈະຮັບຮອງເອົາສະເພາະແຕ່ການ ອະທິບາຍ ທີ່ມີເຫດຜົນ ພຽງພໍ ເທົ່ານັ້ນ, ຖ້າຫາກວ່າ ຄຳອະທິບາຍດັ່ງກ່າວນີ້ ບໍ່ເປັນຫນ້າ ເຊື່ອຖືໄດ້ນັ້ນ, ຜູ້ເຂົ້າແຂ່ງຂັນປະມູນນັ້ນ ຕ້ອງຖືກ ຕັດອອກຈາກການປະມູນ ແລະ ເຫດຜົນດັ່ງກ່າວນີ້ ຕ້ອງໄດ້ບັນທຶກໄວ້ຢູ່ໃນບົດລາຍງານກ່ຽວກັບການດຳ-ເນີນ ການປະມູນ ແລະ ອອກແຈ້ງການ ໃນທັນທີທັນໃດ ເພື່ອແຈ້ງ ໃຫ້ຜູ້ເຂົ້າແຂ່ງຂັນປະມູນທີ່ກ່ຽວຂ້ອງຮູ້ ນຳ. ທຸກໆການຕິດ ຕໍ່ພົວພັນລະຫວ່າງຜູ້ຈັດຊື້ ແລະ ຜູ້ເຂົ້າແຂ່ງຂັນປະມູນ ທີ່ພົວພັນເຖິງມາດຕະການໃນ ການຢືນຢັນຄວາມຜິດ ຫລື ການສໍ້ລາດບັງຫລວງ ຕ້ອງໄດ້ຂຽນເປັນລາຍລັກອັກສອນ.

   3.4. ລັດຖະບານ ໄດ້ໃຫ້ນິຍາມຄວາມຫມາຍຂອງຄຳສັບເຫລົ່ານີ້ ເພື່ອເປັນຂໍ້ກຳນົດເຊັ່ນ:

ກ. "ພຶດຕິກຳສໍ້ລາດບັງຫລວງ" ໝາຍເຖິງ ການສະເໜີ, ເອົາໃຫ້ ຫລື ຮັບປາກວ່າຈະໃຫ້ໂດຍທາງກົງ ຫລື ທາງອ້ອມ ຕໍ່ພະນັກງານຜູ້ໃດຜູ້ໜຶ່ງ ຫລື ພະນັກງານຕາມສັນຍາຂອງຜູ້ຈັດຊື້ ຫລື ອົງການລັດ ຫລື ອົງກອນ ເອກະຊົນ ຫລື ນິຕິບຸກຄົນ ດ້ວຍການໃຫ້ເປັນຂອງຂວັນໃນທຸກໆຮູບແບບ, ສິນບົນ ຫລື ການໃຫ້ດ້ວຍວັດ-ຖຸສິ່ງຂອງ ຫລື ຄ່າບໍລິການ ເພື່ອເປັນການຈູງໃຈໃຫ້ມີການກະທຳ ຫລື ຕັດສິນ ຫລື ວິທີການໃກ້ສິດຕິດ ແທດກັບຜູ້ຈັດຊື້ ທີ່ພົວພັນກັບການດຳເນີນການ ປະມູນນັ້ນ.

ຂ. "ພຶດຕິກຳສໍ້ໂກງ" ໝາຍເຖິງການສະເໜີຂໍ້ມູນທີ່ບິດເບືອນ ຫລື ບໍ່ມີມູນຄວາມຈິງ, ທີ່ມີຜົນກະທົບຕໍ່ການ ດຳເນີນການປະມູນ ຫລື ການປະຕິບັດສັນຍາ ຊຶ່ງສ້າງຄວາມເສັຽຫາຍໃຫ້ແກ່ຜູ້ຈັດຊື້.

ຄ. "ພຶດຕິກຳສົມຮູ້ຮ່ວມຄິດ" ໝາຍເຖິງການມີແຜນ ແລະ ມີການກະກຽມໄວ້ກ່ອນແລ້ວ ລະຫວ່າງຜູ້ເຂົ້າ ແຂ່ງ ຂັນປະມູນດ້ວຍກັນແຕ່ສອງ ຫລື ຫລາຍຄົນຂຶ້ນໄປ, ໂດຍທີ່ຜູ້ຈັດຊື້ ບໍ່ໄດ້ຮູ້ຈັກ (ກ່ອນ ຫລື ພາຍຫລັງ ທີ່ໄດ້ຍື່ນຊອງປະມູນແລ້ວ) ເພື່ອສ້າງລາຄາປະມູນປອມ, ບໍ່ມີລັກຊະນະແຂ່ງຂັນ ທີ່ກະທົບເຖິງຜົນປະໂຫຍດ ຂອງຜູ້ຈັດຊື້ໃນຄວາມເປັນອິດສະຫຼະ, ຄວາມໂປ່ງໃສ ແລະ ການແຂ່ງຂັນ ທີ່ແທ້ຈິງ.

ງ. "ພຶດຕິກຳບິບບັງຄັບ" ຫມາຍເຖິງການສ້າງຄວາມເສັຍຫາຍ ແລະ ການຂົ່ມຂູ່ເພື່ອໃຫ້ສ້າງຄວາມ ເສັຍຫາຍ ໃນທາງ ກົງ ຫລືທາງອ້ອມໂດຍບຸກຄົນ ຫລື ດ້ວຍສິດອຳນາດ ຂອງເຂົາ ເພື່ອແຊກແຊງ ຕໍ່ການດຳເນີນການ ປະມູນ ຫລື ມີຜົນກະທົບຕໍ່ການຈັດຕັ້ງປະຕິບັດສັນຍາ.

ຈ. "ພຶດຕິກຳກີດກັ້ນ" ຫມາຍເຖິງ

(1) ມີເຈດຕະນາເພື່ອທຳລາຍ, ປອມແປງ, ດັດແປງ ຫລື ປິດບັງຂໍ້ມູນຫລັກຖານຕໍ່ການສອບສວນ ຫລື ສ້າງຂໍ້ມູນທີ່ບິດເບືອນຕໍ່ພະນັກງານສືບສວນ, ເພື່ອເປັນການປິດບັງຕໍ່ການສອບສວນຂອງລັດຖະບານ ທີ່ຊີ້ ບອກເຖິງການສໍ້ລາດບັງຫລວງ, ການສໍ້ໂກງ, ການສົມຮູ້ຮ່ວມຄິດ ແລະ ການບີບບັງຄັບ ແລະ ຫລື ການ ຂົ່ມຂູ່, ກໍ່ກວນ ຫລື ນາບຂູ່ຕໍ່ພາກສ່ວນໃດໜຶ່ງ ເພື່ອບໍ່ໃຫ້ເປີດເຜີຍຂໍ້ມູນຫລັກຖານທີ່ພົວພັນເຖິງການສອບ ສວນ ຫລື ການປະຕິບັດການສອບສວນ.

(2) ມີເຈດຕະນາ ປິດບັງຂໍ້ມູນຫລັກຖານ ຕໍ່ການດຳເນີນການກວດກາ ແລະ ການກວດສອບຂອງລັດ.

3.5. ລັດຖະບານ ຮຽກຮ້ອງໃຫ້ເຈົ້າຜູ້ຈັດຊື້ ຫລື ບຸກຄົນທີ່ ມີຫນ້າ ທີ່ຮັບຜິດຊອບຕໍ່ການປະມູນ ຕ້ອງຊື່-ສັດຕໍ່ ຫນ້າທີ່ຂອງຕົນ ໂດຍບໍ່ອາໃສຊ່ອງຫວ່າງຂອງລະບຽບການທີ່ໄດ້ກຳນົດໄວ້ແລ້ວນັ້ນ ໃນການຊັກຊວນ, ຮຽກຮ້ອງ ແລະ ຫລື ມີການບີບບັງຄັບ ເພື່ອຜົນປະໂຫຍດສ່ວນຕົວ ທີ່ພົວພັນກັບຂະບວນການ ທີ່ໄດ້ກຳນົດ ໄວ້ຢູ່ຂ້າງເທິງນີ້.

4. **ເອກະສານສະເໜີສົມທຽບລາຄາ:** ເອກະສານສະເໜີສົມທຽບລາຄາປະກອບມີເອກະສານ ດັ່ງນີ້:

ໜັງສືເຊີນເຂົ້າຮ່ວມການປະມູນສົມທຽບລາຄາ
ຫມວດທີ 1: ຄ່າແນະນຳສຳລັບຜູ້ສະຫນອງສິນຄ້າ.
ຫມວດທີ 2: ຂໍ້ມູນກ່ຽວກັບຜູ້ສະຫນອງສິນຄ້າ.
ຫມວດທີ 3: ເງື່ອນໄຂຂອງສັນຍາ.
ຫມວດທີ 4: ແບບຟອມຍື່ນສົມທຽບລາຄາ.
ຫມວດທີ 5:ຕາຕະລາງລາຍການສິນຄ້າ ແລະ ການສະເໜີ ລາຄາ.
ຫມວດທີ 6: ມາດຕະຖານເຕັກນິກ.
ຫມວດທີ 7:ຕາຕະລາງລາຍການສິນຄ້າ ແລະ ການສົ່ງມອບສິນຄ້າ.
ຫມວດທີ 8: ຮູບຕົວຢ່າງສິນຄ້າ.
ຫມວດທີ 9: ສັນຍາ.

5. **ເອກະສານທີ່ປະກອບໃນການຍື່ນສະເໜີລາຄາ:** ຜູ້ສະໜອງສິນຄ້າຕ້ອງປະກອບເອກະສານ ສະເໜີລາຄາ ໂດຍມີ ເອກະສານ ດັ່ງນີ້:

(ກ). ແບບຟອມຍື່ນສະເໜີລາຄາ;

(ຂ). ຕາຕະລາງລາຍການສິນຄ້າ ແລະ ການສະເໜີລາຄາ;

(ຄ). ມາດຕະຖານເຕັກນິກຂອງສິນຄ້າທີ່ຈະສະໜອງໃຫ້;

(ງ). ຂໍ້ມູນກ່ຽວກັບຜູ້ສະໜອງສິນຄ້າ;

(ຈ). ຕາຕະລາງລາຍການສິນຄ້າ ແລະ ການສົ່ງມອບສິນຄ້າ;

(ສ). ຂໍ້ມູນ ແລະ ການາລອກ ຂອງສິນຄ້າທີ່ກ່ຽວຂ້ອງກັບ ລາຍການສິນຄ້າ.

6. **ມາດຕະຖານໃນການສົມທຽບ ແລະ ການປະເມີນ**: ຜູ້ສະໜອງສິນຄ້າ ຕ້ອງສະເໜີສະໜອງສິນຄ້າ ໃຫ້ຄົບຖ້ວນທຸກໆລາຍການທີ່ ຕ້ອງການ ຕາມທີ່ລະບຸໄວ້ຢູ່ໃນໝວດທີ 5: ຕາຕະລາງລາຍການສິນຄ້າ ແລະການສະເໜີລາຄາ. ຜູ້ຈັດຊື້ມີສິດໃນການປະຕິເສດ ການສະເໜີລາຄາໄດ້ດັ່ງນີ້:

1. ເອກະສານ ທີ່ປະກອບມາບໍ່ຄົບຖ້ວນສົມບູນ;
2. ມາດຕະຖານເຕັກນິກທີ່ສະເໜີມາບໍ່ຖືກຕ້ອງກັບມາດຕະຖານ ເຕັກນິກທີ່ຕ້ອງການ. ການຮັບຮອງເອົາເປັນ ຜູ້ຊະນະການປະມູນ ຕ້ອງແມ່ນຜູ້ທີ່ ສະເໜີລາຄາ ທີ່ໄດ້ປະເມີນ ວ່າແມ່ນລາຄາຕ່ຳ;

7. **ການສົມທຽບລາຄາມີຜົນໃຊ້ໄດ້**: ລາຄາທີ່ສະເໜີມາຕ້ອງມີຜົນໃຊ້ໄດ້ *30 ວັນ*, ເລີ້ມ ແຕ່ວັນຕໍ່ມາຂອງວັນ ທີ່ກຳນົດເປັນວັນປິດຮັບຊອງສະເໜີລາຄາ ຕາມທີ່ລະບຸໄວ້ ຢູ່ໃນຂໍ້ທີ 14 ຂອງຄຳແນະນຳສຳລັບຜູ້ສະໜອງ ສິນຄ້າ ຮອດວັນທີ *14 ເມສາ 2017*.

8. **ການຍື່ນຊອງປະມູນ**: ຜູ້ເຂົ້າແຂ່ງຂັນປະມູນຫນຶ່ງສາມາດ ຍື່ນຊອງປະມູນໄດ້ພຽງແຕ່ຊອງດຽວເທົ່ານັ້ນ.

9. **ສະກຸນເງິນໃນການສົມທຽບ**: ລາຄາລວມທັງຫມົດ ຈະສົມທຽບເປັນ ເງິນກີບ.

10. **ລາຄາ**: ລາຄາທີ່ສະເໜີຕ້ອງລວມເອົາ (ອາກອນ, ພາສີ, ການຂົນ ສົ່ງ, ການປະກັນໄພ ແລະ ລາຍຈ່າຍອື່ນໆ ທີ່ອາດຈະເກີດຂຶ້ນໃນ ການສົ່ງມອບສິນຄ້າຮອດສະຖານທີ່ສົ່ງມອບ). ລາຄາທີ່ສະເໜີນີ້ ຕ້ອງບໍ່ມີ ການ ປ່ຽນແປງໃດໆ ໃນຕະຫລອດໄລຍະຂອງການຈັດຕັ້ງປະຕິບັດສັນຍາສະບັບນີ້.

11. **ການຮັບປະກັນ**: ສິນຄ້າທີ່ສະໜອງໃຫ້ນີ້ ຕ້ອງຮັບປະກັນ ຢ່າງນ້ອຍ 1 ປີ.

12. **ການບໍລິການຫລັງການຂາຍ**: ຜູ້ສະໜອງສິນຄ້າ ຕ້ອງສະເໜີຕາຕະລາງລາຄາ (ການບຳລຸງຮັກສາ) ທີ່ຈຳ ເປັນໃນການບຳລຸງຮັກສາ ແລະ ສ້ອມແປງເພື່ອໃຫ້ເຄື່ອງດັ່ງກ່າວນີ້ ສາມາດ ນຳໃຊ້ໄດ້ເປັນປົກກະຕິພາຍໃນ ໄລຍະ 1 ປີຂຶ້ນໄປ.

13. **ການປະກອບເອກະສານ ແລະ ການຕີລາຄາຂອງການສະເໜີລາຄາ**: ຜູ້ສະໜອງສິນຄ້າ ຕ້ອງປະກອບ ເອກະສານ ສະເໜີລາຄາ ສະບັບຕົ້ນ ຈຳນວນ 1 ສະບັບ ແລະ ສະບັບສຳເນົາ ຈຳນວນ 1 ສະບັບ ພ້ອມທັງຂຽນຫມາຍ ໃສ່ວ່າ "ສະບັບຕົ້ນ" ແລະ "ສະບັບສຳເນົາ" ໃນກໍລະນີ ເອກະສານທີ່ປະກອບມານັ້ນ ຫາກມີ ເອກະສານບໍ່ຄົບ ຖ້ວນ ລະຫວ່າງສະບັບຕົ້ນ ແລະ ສະບັບສຳເນົານັ້ນ ແມ່ນໃຫ້ຖືເອົາສະບັບຕົ້ນເປັນຫລັກ. ເອກະສານສະບັບ ຕົ້ນ ແລະ ສະບັບສຳເນົາ ແຕ່ລະສະບັບຕ້ອງຂຽນ ຫລື ພິມດ້ວຍນ້ຳເມິກ ທີ່ລຶບບໍ່ອອກງ່າຍ ແລະ ຕ້ອງເຊັນ ໂດຍຜູ້ທີ່ ມີສິດອຳນາດເຕັມ ທີ່ສາມາດເຊັນ ໃນນາມ ຜູ້ສະໜອງສິນຄ້າ, ຊື່ ແລະ ນາມ ສະກຸນ, ຕຳແໜ່ງ ຂອງ ຜູ້ທີ່ໄດ້ຮັບການມອບຫມາຍ ຕ້ອງພິມໃສ່ ຢູ່ກ້ອງລາຍເຊັນ. ທຸກໆ ຫວ່າງຂອງແຖວ, ການລຶບ ຫລື

ການຂຽນຢອງໃສ່ຂ້າງເທິງ ຈະມີຜົນ ໃຊ້ໄດ້ນັ້ນ ກໍຕໍ່ເມື່ອວ່າໄດ້ມີການເຊັນຫຍໍ້ກຳກັບ ໂດຍຜູ້ທີ່ເຊັນເອກະສານປະມູນ ຜູ້ສະຫນອງສິນຄ້າຫນຶ່ງ ສາມາດຍື່ນຊອງສົມທຽບ ລາຄາໄດ້ພຽງແຕ່ຫນຶ່ງ (1)ຊອງເທົ່ານັ້ນ.

14. **ສະຖານທີ່ ແລະ ມື້ສຸດທ້າຍໃນການຍື່ນຊອງສົມທຽບລາຄາ**: ຊອງສົມ ທຽບລາຄາ ຕ້ອງຍື່ນຊ້າສຸດ ບໍ່ໃຫ້ເກີນ *ເວລາ 10:00 ໂມງຕອນເຊົ້າ ຂອງວັນທີ 16 ມີນາ 2017 ຢູ່ທີ່ ຫ້ອງການກອງທຶນປົກປັກຮັກສາສິ່ງແວດລ້ອມ, ເຂດນາໄຮ່ຄຽວ, ຕຶກ ກຊສ 100, ຊັ້ນ 2, ນະຄອນຫຼວງວຽງຈັນ, ໂທ : 021 252 739, ແຟກ: 021 252 741.* ຊອງສົມທຽບລາຄາໃດ ທີ່ໄດ້ຮັບພາຍຫລັງ ເວລາທີ່ກຳນົດເປັນເວລາປິດຮັບຊອງນັ້ນ ຈະຖືວ່າເປັນການສົ່ງຊອງຊ້າ ແລະ ຈະຖືກປະຕິເສດ ແລະ ສົ່ງຄືນໃຫ້ເຈົ້າຂອງ ໂດຍບໍ່ໄດ້ມີການເປີດຊອງ.

15. **ການປ່ຽນແປງ ຫລື ການຖອນຊອງສົມທຽບລາຄາ:** ພາຍຫລັງທີ່ ໄດ້ຍື່ນຊອງແລ້ວນັ້ນ, ກ່ອນຮອດ ເວລາປິດຮັບຊອງສົມທຽບລາຄາ, ຜູ້ສະຫນອງສິນຄ້າ ອາດສາມາດຖອນຊອງສົມທຽບລາຄາ ຂອງຕົນ ໄດ້ໂດຍຕ້ອງໄດ້ສະເຫນີເປັນລາຍລັກອັກສອນຫາຜູ້ຈັດຊື້. ພາຍຫລັງເວລາປິດຮັບ ຊອງສົມທຽບ ລາຄາທີ່ໄດ້ກຳນົດໄວ້ຢູ່ໃນຂໍ້ທີ 14 ຂ້າງເທິງ ຜູ້ຈັດຊື້ ຈະບໍ່ອະນຸຍາດໃຫ້ມີການຖອນຊອງ ສົມທຽບລາຄາໄດ້. ການຖອນຊອງສົມທຽບລາຄາ ພາຍຫລັງເວລາປິດຮັບຊອງ ແລ້ວນັ້ນ ແລະ ໃນໄລຍະເວລາທີ່ອາຍຸການສົມທຽບລາຄາຍັງມີຜົນໃຊ້ໄດ້ຢູ່ນັ້ນ, ຜູ້ຈັດຊື້ ຈະຖືວ່າ ຜູ້ເຂົ້າແຂ່ງຂັນປະມູນນັ້ນ ເປັນຜູ້ທີ່ບໍ່ມີຄວາມເຫມາະສົມ.

16. **ການເປີດຊອງສົມທຽບລາຄາ:** ຊອງສົມທຽບລາຄາຈະເປີດໃນ *ເວລາ 10:00 ໂມງຕອນເຊົ້າ ຂອງວັນທີ 16 ມີນາ 2017 ຢູ່ທີ່ ຫ້ອງການກອງທຶນປົກປັກຮັກສາສິ່ງແວດລ້ອມ, ເຂດນາໄຮ່ຄຽວ, ຕຶກ ກຊສ 100, ຊັ້ນ 2, ນະຄອນຫຼວງວຽງຈັນ, ໂທ : 021 252 739, ແຟກ: 021 252 741.* ເອກະສານສົມທຽບລາຄາ ຕ້ອງໄດ້ເປີດໃນເວລາຕໍ່ມານັ້ນໂລດ, ພາຍຫລັງ ເວລາທີ່ໄດ້ປິດຮັບຊອງສົມທຽບລາຄາ ໂດຍເປີດຊ້ອງຫນ້າຄະນະກຳມະການປະມູນ ແລະ ຜູ້ຕາງຫນ້າຂອງຜູ້ທີ່ຍື່ນຊອງສົມທຽບ ລາຄາທີ່ສົນໃຈເຂົ້າຮ່ວມ. ການປະກາດໃນເວລາເປີດຊອງສົມທຽບລາຄາ ແມ່ນໃຫ້ອ່ານຊື່ຂອງ ຜູ້ສະຫນອງສິນຄ້າ, ມີການຖອນ ຫລື ປ່ຽນແປງ, ຖານະດ້ານກົດຫມາຍ (ຫນັງສືອະນຸຍາດດຳເນີນທຸລະກິດ ແລະ ໃບຢັ້ງຢືນການມອບພັນທະອາກອນ), ລາຄາປະມູນ, ການຫລຸດລາຄາ. ຜູ້ຈັດຊື້ ຕ້ອງໄດ້ແຈກຢາຍບົດບັນທຶກ ການເປີດຊອງສົມທຽບລາຄາໃຫ້ແກ່ຜູ້ເຂົ້າຮ່ວມທຸກໆຄົນ. ໃນເວລາເປີດຊອງ ສົມທຽບລາຄານັ້ນ, ຫ້າມບໍ່ໃຫ້ມີ ການປະຕິເສດຊອງສົມທຽບລາຄາ, ເວັ້ນເສັຍແຕ່ຊອງສົມທຽບລາຄາໃດ ທີ່ສົ່ງຊ້າເທົ່ານັ້ນ.

17. **ການຮັກສາເປັນຄວາມລັບ:** ພາຍຫລັງທີ່ໄດ້ເປີດຊອງສົມທຽບລາຄາແລ້ວ, ທຸກໆຂໍ້ມູນ ທີ່ພົວພັນ ກັບ ການພິຈາລະນາ, ການຂໍຄວາມກະຈ່າງແຈ້ງ ແລະ ການປະເມີນ ການສົມທຽບລາຄາ ແລະ ການສະເຫນີ ຮັບຮອງ ເອົາເປັນຜູ້ຊະນະການປະມູນ ແມ່ນບໍ່ສາມາດເປີດເຜີຍໃຫ້ຜູ້ສະຫນອງສິນຄ້າ ຫລື ບຸກຄົນອື່ນໆ ທີ່ບໍ່ມີສ່ວນກ່ຽວຂ້ອງທາງການ ຮູ້ໄດ້ໃນເວລາປະເມີນ ການປະມູນຈົນກວ່າຈະໄດ້ປະກາດຮັບຮອງ ເອົາຜູ້ຊະນະການປະມູນ.

18. **ການປະເມີນ ແລະ ການສົມທຽບຊອງສົມທຽບລາຄາ:** ຜູ້ຈັດຊື້ຈະຮັບຮອງເອົາເປັນຜູ້ຊະນະການສົມທຽບລາຄານັ້ນຕ້ອງແມ່ນຜູ້ທີ່ສະເຫນີລາຄາທີ່ມີຄວາມເຫມາະສົມ ແລະ ຄົບຖ້ວນຕາມເອກະສານ ສົມທຽບລາຄາ ແລະ ເປັນຜູ້ທີ່ສະເຫນີລາຄາ ທີ່ໄດ້ປະເມີນວ່າແມ່ນ ລາຄາຕ່ຳ. ການປະເມີນການສົມທຽບລາຄາ, ຜູ້ຈັດຊື້ຈະໃຈ້ແຍກ ແຕ່ລະຊອງສົມທຽບລາຄາໂດຍການ ເພີ້ມຕື່ມໃສ່ໃນການກວດແກ້ ການຄິດໄລ່ຜິດພາດດັ່ງນີ້:

(ກ). ຖ້າຫາກວ່າມີການຄາດເຄື່ອນກັນລະຫວ່າງມູນຄ່າທີ່ຂຽນເປັນຕົວເລກ ແລະ ການຂຽນເປັນຕົວຫນັງສື, ແມ່ນໃຫ້ຖືເອົາມູນຄ່າທີ່ຂຽນເປັນຕົວຫນັງສື;

(ຂ). ຖ້າຫາກວ່າ ມີການຄາດເຄື່ອນກັນລະຫວ່າງລາຄາຫົວໜ່ວຍ ແລະ ລາຄາລວມທີ່ແມ່ນຜົນຂອງ ການຄູນຈາກລາຄາ ຫົວໜ່ວຍກັບຈຳນວນແມ່ນໃຫ້ຖືເອົາລາຄາຫົວໜ່ວຍເປັນຫລັກ.

19. **ສິດຂອງຜູ້ຈັດຊື້:** ໂດຍຂຶ້ນກັບຄວາມຕ້ອງການສຸດທ້າຍ, ຜູ້ຈັດຊື້ ອາດສາມາດເພີ້ມ ຫລື ຫລຸດຈຳນວນລົງໄດ້ ສິບຫ້າ(15)% ຂອງຈຳນວນສິນຄ້າ. ຖ້າຫາກວ່າ ໃນກໍລະນີມີການປ່ຽນແປງເພີ້ມ ຫລື ຫລຸດຈຳນວນນັ້ນ ຕ້ອງໃຫ້ເຫດຜົນໃນການປ່ຽນແປງດັ່ງກ່າວ, ຕ້ອງໄດ້ອະທິບາຍຢູ່ໃນບົດລາຍງານການປະມູນຈັດຊື້. ກ່ອນ ການຕົກລົງຮັບຮອງເອົາເປັນຜູ້ຊະນະການສົມທຽບລາຄາ, ຜູ້ຈັດຊື້ສະຫງວນສິດໃນການຮັບຮອງເອົາ ຫລື ປະຕິເສດຊອງສົມທຽບລາຄາຊອງໃດຊອງໜຶ່ງ ຫຼື ປະຕິເສດໝົດທຸກຊອງ ແລະ ສາມາດລົບລ້າງຂັ້ນຕອນ ການແຂ່ງຂັນໄດ້ທຸກໆເວລາ, ໂດຍຈະບໍ່ຮັບຜິດຊອບໃດໆ ຕໍ່ສິ່ງເສຍຫາຍທີ່ກະທົບຕໍ່ຜູ້ສະໜອງສິນຄ້າ ຫລື ບໍ່ຈຳເປັນຕ້ອງອະທິບາຍເຫດຜົນໃດໆຕໍ່ຜູ້ສະໜອງສິນຄ້າ.

20. **ການປະກາດຮັບຮອງເອົາເປັນຜູ້ຊະນະການປະມູນ:** ກ່ອນໄລຍະເວລາເອກະສານສົມທຽບລາຄາ ມີຜົນໃຊ້ ໄດ້ ຈະໜົດ ອາຍຸ, ຜູ້ຈັດຊື້ ຈະແຈ້ງຫາຜູ້ສະໜອງສິນຄ້າ ທີ່ສະເໜີລາຄາເໝາະສົມ ແລະ ຄົບຖ້ວນ ຕາມເອ-ກະສານສົມທຽບລາຄາ ແລະ ເປັນຜູ້ທີ່ສະເໜີລາຄາ ທີ່ໄດ້ປະເມີນວ່າແມ່ນລາຄາຕ່ຳ. ຜູ້ສະໜອງ ສິນຄ້າ ທີ່ ໄດ້ຮັບຮອງເອົາເປັນຜູ້ຊະນະການປະມູນ ຕ້ອງໄດ້ເຊັນສັນຍາພາຍໃນກຳນົດ ສິບຫ້າ(15) ວັນ.

21. **ການແຈ້ງການຫາຜູ້ເຂົ້າແຂ່ງຂັນປະມູນ ທີ່ບໍ່ໄດ້ຮັບຮອງເອົາເປັນຜູ້ຊະນະການປະມູນ:** ພາຍຫລັງເຊັນສັນຍາ ແລ້ວ, ຜູ້ຈັດຊື້ຕ້ອງ ອອກແຈ້ງການຫາຜູ້ເຂົ້າແຂ່ງຂັນປະມູນ ທີ່ບໍ່ໄດ້ຮັບຮອງເອົາເປັນ ຜູ້ຊະນະການປະມູນ ທຸກໆຄົນ. ຜູ້ເຂົ້າແຂ່ງຂັນປະມູນມີສິດສະເໜີ ຂໍລາຍລະອຽດກ່ຽວກັບຕົນເອງ ທີ່ບໍ່ໄດ້ຮັບໄຊຊະນະ ແລະ ຜູ້ ຈັດຊື້ ຕ້ອງໄດ້ຕອບ ແລະ ອະທິບາຍໃຫ້ເຂົາເຈົ້າຮັບຮູ້.

22. **ສັນຍາທີ່ໄດ້ເຊັນແລ້ວນັ້ນ** ຕ້ອງໄດ້ຈົດທະບຽນສັນຍາ, ຊຶ່ງແມ່ນ ຄວາມຮັບຜິດຊອບຂອງຜູ້ສະໜອງສິນຄ້າ ເພື່ອໃຫ້ສອດຄ່ອງກັບ ດຳລັດວ່າດ້ວຍການຈົດທະບຽນເອກະສານ, ສະບັບເລກທີ 52/ນຍ, ລົງວັນທີ 13 ມີນາ 1993.

23. **ຜູ້ຈັດຊື້** ຕ້ອງໄດ້ອອກເຜີຍແຜ່ຂໍ້ມູນກ່ຽວກັບການປະກາດຮັບຮອງເອົາການປະມູນຢູ່ໃນເວບໄຊ ແລະ ບ່ອນ ສະຖານທີ່ ທີ່ສາທາລະນະສາມາດເຫັນຂໍ້ມູນໄດ້, ຢູ່ທາງນອກຂອງຫ້ອງການຂອງເຈົ້າຂອງໂຄງການ ທີ່ລະບຸ ເຖິງ (ກ) ຊື່ຂອງບໍລິສັດ ທີ່ໄດ້ຍື່ນຊອງປະມູນ; (ຂ) ລາຄາທີ່ອ່ານອອກໃນເວລາເປີດຊອງປະມູນ; (ຄ) ລາຍ ຊື່ ແລະ ລາຄາຂອງແຕ່ລະບໍລິສັດ ທີ່ຜ່ານການປະເມີນ; (ງ) ລາຍຊື່ຂອງບໍລິສັດ ທີ່ຖືກປະຕິເສດ ແລະ ເຫດ-ຜົນໃນການປະຕິເສດ; (ຈ) ຊື່ຂອງບໍລິສັດ ທີ່ໄດ້ຮັບຮອງເອົາເປັນຜູ້ຊະນະການປະມູນ, ມູນຄ່າສັນຍາ, ພ້ອມ ທັງອະທິບາຍ, ຖ້າຫາກວ່າລາຄາມີຄວາມແຕກຕ່າງກັບລາຄາທີ່ສະເໜີມາ, ລວມທັງໄລຍະເວລາ ແລະ ສັງ ລວມກ່ຽວກັບຜົນຂອງການຮັບຮອງເອົາເປັນຜູ້ຊະນະການປະມູນ.

24. **ການຕໍ່ວ່າ:** ຜູ້ສະໜອງສິນຄ້າທຸກໆຄົນ ມີສິດໃນການຕໍ່ວ່າ, ຖ້າຫາກວ່າຕົນເອງມີຜົນກະທົບ ຫລື ມີຄວາມ ເຊື່ອມເສັຍ ຫລື ເສັຍຫາຍ ທີ່ເປັນການກະທຳຜິດໂດຍຜູ້ຈັດຊື້ ຕາມທີ່ກຳນົດໄວ້ຢູ່ໃນດຳລັດ ເລກທີ 03 ແລະ ລະບຽບການຈັດຕັ້ງປະຕິບັດດຳລັດ, ເລກທີ 063/ກງ, ລົງວັນທີ 12 ມີນາ 2004 ແລະ ສະບັບດັດ ແກ້, ເລກທີ 0861/ກງ, ລົງວັນທີ 05 ພຶດສະພາ 2009. ການຕໍ່ວ່າ ຕ້ອງຍື່ນຫາ ຫ້ອງການກອງທຶນປົກ ປັກຮັກສາສິ່ງແວດລ້ອມ ແລະ ສິ່ງສຳເນົາໃຫ້ຫ້ອງການຄຸ້ມຄອງຕິດຕາມ ລະບຽບການປະມູນຈັດຊື້, ກະຊວງ ການເງິນ.

ຖ້າຫາກວ່າ ແຫລ່ງທຶນ ທີ່ໄດ້ຮັບການຊ່ວຍເຫລືອລ້າ ຫລື ກູ້ຢືມຈາກ ທະນາຄານພັດທະນາອາຊີ/ທະນາຄານໂລກ, ສະຖາບັນການເງິນ ຫລື ອົງການທີ່ກ່ຽວຂ້ອງ, ຜູ້ເຂົ້າແຂ່ງຂັນປະມູນ ຕ້ອງໄດ້ສົ່ງສຳເນົາ ການຕໍ່ວ່າດັ່ງກ່າວນີ້ ຫາທະນາຄານພັດທະນາອາຊີ, ທະນາຄານໂລກ, ສະຖາບັນການເງິນ ຫລື ອົງການທີ່ກ່ຽວຂ້ອງ.

ໝວດທີ 2: ຂໍ້ມູນກ່ຽວກັບຜູ້ສະໜອງສິນຄ້າ

ຜູ້ສະໜອງສິນຄ້າຕ້ອງປະກອບບັນດາເອກະສານດັ່ງລຸ່ມນີ້:

1. ຊື່ທີ່ຖືກຕ້ອງຕາມກົດໝາຍຂອງຜູ້ສະໜອງສິນຄ້າ, ທີ່ຢູ່ທາງການ,
2. ສຳເນົາໜັງສືອະນຸຍາດດຳເນີນ ທຸລະກິດ,
3. ໃບຢັ້ງຢືນການມອບພັນທະອາກອນ,
4. ໜັງສືມອບສິດໃນການເຊັນເອກະສານປະມູນສະບັບຕົ້ນ (ໃນກໍລະນີ ຜູ້ທີ່ເຊັນເອກະສານປະມູນ ບໍ່ແມ່ນ ຜູ້ທີ່ມີສິດອຳນາດເຕັມຂອງບໍລິສັດ ເປັນຜູ້ເຊັນເອກະສານປະມູນ, ໜັງສືມອບສິດຕ້ອງໄດ້ປະກອບມາພ້ອມ).

ຫມວດທີ 3: ເງື່ອນໄຂຂອງສັນຍາ

1. **ບັນດາເອກະສານທີ່ປະກອບເປັນສັນຍາ ໄດ້ຈັດລຽງຕາມລະດັບຄວາມສໍາຄັນດັ່ງນີ້:**

   (ກ) ສັນຍາ ທີ່ໄດ້ເຊັນກັນລະຫວ່າງສອງຝ່າຍ.

   (ຂ) ເງື່ອນໄຂຂອງສັນຍາ.

   (ຄ) ຕາຕະລາງລາຍການສິນຄ້າ ແລະລາຄາ.

   (ງ) ມາດຕະຖານເຕັກນິກຂອງສິນຄ້າທີ່ຈະສະຫນອງໃຫ້.

   (ຈ) ຕາຕະລາງການສົ່ງມອບສິນຄ້າ.

2. ສັນຍາສະບັບນີ້ ສາມາດດັດແກ້ໄດ້ສະເພາະແຕ່ໄດ້ມີການຕົກລົງເຫັນດີ ທີ່ເປັນລາຍລັກອັກສອນ ລະຫວ່າງ ຜູ້ຈັດຊື້ ແລະ ຜູ້ສະຫນອງສິນຄ້າ.

3. ການສໍ້ໂກງ ແລະ ການສໍ້ລາດບັງຫລວງ:

   3.1 ລັດຖະບານ ຮຽກຮ້ອງໃຫ້ຜູ້ຈັດຊື້, ຜູ້ເຂົ້າແຂ່ງຂັນປະມູນ ຫລື ຜູ້ສະຫນອງສິນຄ້າ, ຕ້ອງປະຕິບັດຕາມລະບຽບກົດໝາຍ ຢ່າງເຂັ້ມງວດໃນການຈັດຕັ້ງປະຕິບັດການປະມູນຈັດຊື້ ແລະ ຈັດຕັ້ງປະຕິບັດ ສັນຍາໃຫ້ຖືກຕ້ອງ ຕາມລະບຽບລາຍ ຈ່າຍງົບປະມານຂອງລັດ.

   3.2 ໂດຍປະຕິບັດຕາມລະບຽບກົດໝາຍ ຫາກມີຜູ້ຂົ້າແຂ່ງຂັນລະເມີດ ຜູ້ຈັດຊື້ຕ້ອງໄດ້ປະຕິບັດດັ່ງນີ້:

   ກ). ຕັດຜູ້ເຂົ້າແຂ່ງຂັນປະມູນນັ້ນອອກຈາກການແຂ່ງຂັນປະມູນດັ່ງກ່າວ ຫລື ບໍ່ຮັບຮອງເອົາເປັນຜູ້ຊະນະການປະມູນ;

   ຂ). ຖ້າຫາກວ່າ ຜູ້ເຂົ້າແຂ່ງຂັນປະມູນນັ້ນ ຖືກຕັດສິນວ່າ ມີການກະທໍາທີ່ພົວພັນກັບການສໍ້ລາດ ບັງຫລວງ ຫລື ການສໍ້ໂກງ, ການສົມຮູ້ຮ່ວມຄິດ ຫລື ການບີບ ບັງຄັບໃນ ການແຂ່ງຂັນປະມູນ ຫລື

ມີການກະທຳ ເພື່ອໃຫ້ຕົນເອງໄດ້ຮັບສັນຍາ. ຜູ້ເຂົ້າແຂ່ງຂັນປະ ມູນນັ້ນຈະຖືກປະກາດແຈ້ງການວ່າ ເປັນຜູ້ທີ່ບໍ່ມີ ຄວາມເຫມາະສົມ, ພ້ອມທັງກຳນົດ ຫຼື ລະບຸເວລາ ທີ່ຖືກຫ້າມບໍ່ໃຫ້ເຂົ້າຮ່ວມແຂ່ງຂັນ ໃນການປະມູນຈັດຊື້ຂອງລັດ.

3.3. ການກະທຳທີ່ພົວພັນການສໍ້ລາດບັງຫລວງ, ການສໍ້ໂກງ, ການສົມຮູ້ຮ່ວມຄິດ ຫລືການບີບບັງຄັບ ໃນທຸກໆຮູບແບບ ທີ່ໄດ້ກຳນົດໄວ້ຢູ່ໃນຂໍ້ທີ 3.4 ໂດຍທີ່ຜູ້ຈັດຊື້ ສາມາດຮູ້ເຫັນ ໄດ້ນັ້ນ. ຜູ້ຈັດຊື້ ຕ້ອງໄດ້ດຳເນີນການແຕ່ຫົວທີໂລດກັບ ຜູ້ເຂົ້າແຂ່ງຂັນປະມູນນັ້ນ, ດ້ວຍການເຊີນເອົາ ຜູ້ເຂົ້າແຂ່ງ ຂັນ ປະມູນນັ້ນ ເຂົ້າມາອະທິບາຍ ແລະຊີ້ແຈງຕໍ່ຜູ້ຈັດຊື້. ຜູ້ຈັດຊື້ ຈະຮັບຮອງເອົາສະເພາະແຕ່ການ ອະທິບາຍທີ່ມີເຫດ ຜົນພຽງພໍເທົ່ານັ້ນ, ຖ້າຫາກວ່າ ຄຳອະທິບາຍດັ່ງກ່າວນີ້ ບໍ່ ເປັນຫນ້າ ເຊື່ອຖືໄດ້ ນັ້ນ, ຜູ້ເຂົ້າແຂ່ງຂັນປະມູນນັ້ນ ຕ້ອງຖືກ ຕັດອອກ ຈາກການປະມູນ ແລະເຫດຜົນດັ່ງກ່າວນີ້ ຕ້ອງ ໄດ້ບັນທຶກໄວ້ຢູ່ໃນບົດລາຍງານກ່ຽວກັບການດຳເນີນ ການ ປະມູນ ແລະອອກແຈ້ງການ ໃນທັນທີ ທັນໃດ ເພື່ອແຈ້ງ ໃຫ້ຜູ້ ເຂົ້າແຂ່ງຂັນປະມູນທີ່ກ່ຽວຂ້ອງຮູ້ນຳ. ທຸກໆການ ຕິດ ຕໍ່ພົວພັນ ລະຫວ່າງ ຜູ້ຈັດຊື້ ແລະຜູ້ເຂົ້າແຂ່ງຂັນປະມູນ ທີ່ພົວພັນ ເຖິງມາດຕະການໃນການຢືນຢັນຄວາມຜິດ ຫລື ການ ສໍ້ລາດບັງຫລວງ ຕ້ອງໄດ້ຂຽນເປັນລາຍລັກອັກສອນ.

3.4. ລັດຖະບານ ໄດ້ກຳນົດຄວາມຫມາຍຂອງຄຳສັບເຫລົ່ານີ້ ເພື່ອເປັນຂໍ້ກຳນົດ ດັ່ງນີ້:

ກ. "ພຶດຕິກຳສໍ້ລາດບັງຫລວງ" ໝາຍເຖິງ ການສະເຫນີ, ເອົາໃຫ້ ຫລືຮັບປາກວ່າຈະໃຫ້ໂດຍທາງກົງ ຫລື ທາງອ້ອມ ຕໍ່ພະນັກງານຜູ້ໃດຜູ້ນຶ່ງ ຫລື ພະນັກງານຕາມສັນຍາຂອງຜູ້ຈັດຊື້ ຫລື ອົງການລັດ ຫລື ອົງ ກອນເອກະຊົນ ຫລື ນິຕິບຸກຄົນ ດ້ວຍການໃຫ້ເປັນຂອງຂວັນໃນທຸກໆຮູບແບບ, ສິນບົນ ຫລື ການໃຫ້ ດ້ວຍວັດຖຸສິ່ງຂອງ ຫລື ຄ່າບໍລິການ ເພື່ອເປັນການຈູງໃຈໃຫ້ມີການກະທຳ ຫລື ຕັດສິນ ຫລື ວິທີການ ໃກ້ສິດຕິດແທດກັບຜູ້ຈັດຊື້ ທີ່ພົວພັນກັບການດຳເນີນການປະມູນນັ້ນ.

ຂ. "ພຶດຕິກຳສໍ້ໂກງ" ໝາຍເຖິງການສະເໜີຂໍ້ມູນທີ່ບິດເບືອນ ຫລືບໍ່ມີມູນຄວາມຈິງ, ທີ່ມີຜົນກະທົບຕໍ່ການ ດຳເນີນການປະມູນ ຫລືການປະຕິບັດສັນຍາ ຊຶ່ງສ້າງຄວາມ ເສັຽຫາຍໃຫ້ແກ່ຜູ້ຈັດຊື້.

ຄ. "ພຶດຕິກຳສົມຮູ້ຮ່ວມຄິດ" ໝາຍເຖິງການມີແຜນ ແລະໄດ້ມີການກະກຽມໄວ້ກ່ອນແລ້ວ ລະຫວ່າງຜູ້ ເຂົ້າ ແຂ່ງ ຂັນປະມູນດ້ວຍກັນ ແຕ່ສອງ ຫລືຫລາຍຄົນຂຶ້ນໄປ, ໂດຍທີ່ຜູ້ຈັດຊື້ ບໍ່ໄດ້ຮູ້ຈັກ (ກ່ອນ ຫລື ພາຍຫລັງ ທີ່ໄດ້ຍື່ນຊອງປະມູນແລ້ວ) ເພື່ອສ້າງລາຄາປະມູນປອມ, ບໍ່ມີລັກຊະນະແຂ່ງຂັນ ທີ່ກະທົບ ເຖິງຜົນປະໂຫຍດຂອງຜູ້ຈັດຊື້ໃນຄວາມເປັນອິດສະຫຼະ, ຄວາມໂປ່ງໃສ ແລະ ການແຂ່ງຂັນທີ່ແທ້ຈິງ.

ງ. "ພຶດຕິກຳບີບບັງຄັບ" ຫມາຍເຖິງການສ້າງຄວາມເສັຽຫາຍ ແລະການຂົ່ມຂູ່ເພື່ອໃຫ້ສ້າງຄວາມ ເສັຽຫາຍ ໃນທາງກົງ ຫລືທາງອ້ອມໂດຍບຸກຄົນ ຫລື ດ້ວຍສິດອຳນາດຂອງເຂົາ ເພື່ອແຊກແຊງ ຕໍ່ການ ດຳເນີນ ການປະມູນ ຫລືມີຜົນກະທົບ ຕໍ່ການຈັດຕັ້ງ ປະຕິບັດສັນຍາ.

ຈ. "ພຶດຕິກຳກີດກັ້ນ" ຫມາຍເຖິງ

(1). ມີເຈດຕະນາເພື່ອທຳລາຍ, ປອມແປງ, ດັດແປງ ຫລືປິດບັງຂໍ້ມູນຫລັກຖານຕໍ່ການສອບສວນ ຫລື ສ້າງຂໍ້ມູນທີ່ບິດເບືອນຕໍ່ພະນັກງານສືບສວນສອບສວນ, ລວມທັງປິດບັງຕໍ່ການສອບສວນຂອງລັດ ທີ່ ຢັ້ງຢືນເຖິງການສໍ້ລາດບັງຫລວງ, ການສໍ້ໂກງ, ການສົມຮູ້ຮ່ວມຄິດ ແລະການບີບບັງຄັບ ແລະ ຫລື ການຂົ່ມຂູ່, ກໍ່ກວນ ຫລືນາບຂູ່ຕໍ່ພາກສ່ວນໃດນຶ່ງ ເພື່ອບໍ່ໃຫ້ເປີດເຜີຍຂໍ້ມູນຫລັກຖານທີ່ພົວພັນເຖິງ ການສອບສວນ ຫລືການປະຕິບັດການສອບສວນ.

(2). ມີເຈດຕະນາປິດບັງຂໍ້ມູນຫລັກຖານຕໍ່ການດຳເນີນການກວດກາ ແລະການກວດສອບຂອງ ລັດ.

3.5. ລັດຖະບານ ຮຽກຮ້ອງໃຫ້ຜູ້ຈັດຊື້ ຫລືບຸກຄົນທີ່ມີໜ້າ ທີ່ຮັບຜິດຊອບຕໍ່ການປະມູນ ຕ້ອງຊື່ສັດຕໍ່ ໜ້າທີ່ຂອງຕົນ ໂດຍບໍ່ອາໃສຊ່ອງຫວ່າງຂອງລະບຽບການທີ່ໄດ້ກຳນົດໄວ້ແລ້ວນັ້ນ ໃນການຊັກຊວນ , ຮຽກຮ້ອງ ແລະ ຫລືມີການ ບີບບັງຄັບ ເພື່ອຜົນປະໂຫຍດສ່ວນຕົວ ທີ່ພົວພັນກັບຂະ ບວນການ ທີ່ ໄດ້ກຳນົດໄວ້ຢູ່ຂ້າງເທິ່ງນີ້.

4. **ການດັດແກ້ ແລະການປ່ຽນແປງລາຄາ:** ມູນຄ່າສັນຍາ ຈະບໍ່ອະນຸ ຍາດໃຫ້ມີການດັດແກ້ ແລະ ມີການ ປ່ຽນ-ແປງລາຄາໄດ້.

5. **ການຊຳລະເງິນ:** ຜູ້ຈັດຊື້ ຈະຊຳລະເງິນໃຫ້ແກ່ຜູ້ສະໜອງ ສິນຄ້າ ເປັນເງິນສະກຸນເງິນກີບ, ພາຍໃນ30ວັນ ຫລັງຈາກທີ່ສິນຄ້າໄດ້ຖືກສົ່ງເຖິງສະຖານທີ່ ແລະ ຮັບຮອງຕາມທີ່ໄດ້ລະບຸໄວ້ຢູ່ໃນຂໍ້ທີ 8. ມູນຄ່າທັງໝົດ ຂອງສັນຍາ ຈະຖືກຈ່າຍ 100% ຫລັງຈາກໄດ້ຮັບໃບຢັ້ງຢືນຮັບຮອງເອົາສິນຄ້າ ແລະ ໃບບິນ (ສະບັບຕົ້ນ 1 ສະບັບ ແລະ ສະບັບສຳເນົາ 1 ສະບັບ). ວິທີການຊຳລະແມ່ນປະຕິບັດຕາມທີ່ໄດ້ກຳນົດໃນໃບເກັບເງິນຂອງຜູ້ ສະໜອງສິນຄ້າ. ການຊຳລະອາກອນມູນຄ່າເພີ່ມພາສີ ແລະ ຄ່າທຳນຽມຕ່າງໆທີ່ສະແດງໃນໃບເກັບເງິນຂອງ ຜູ້ສະໜອງສິນຄ້າແມ່ນໃຫ້ປະຕິບັດຕາມຂໍ້ກຳນົດກົດລະບຽບທີ່ປະຕິບັດໃນເວລາປະກອບໃບເກັບເງິນ.

6. **ເວລາສົ່ງມອບ:** ສິນຄ້າທັງຫມົດຕ້ອງສົ່ງໃຫ້ຜູ້ຈັດຊື້ໃນ (ເດືອນ/ອາທິດ/ວັນ) ເລີ້ມແຕ່ວັນທີ່ໄດ້ອອກແຈ້ງ ການ ຮັບຮອງເອົາຜູ້ຊະນະການປະມູນ.

7. **ກໍລະນີສົ່ງມອບສິນຄ້າຊ້າ:** ຖ້າຫາກວ່າ ຜູ້ສະໜອງສິນຄ້າ ຫາກ ມີການຊັກຊ້າ ໃນການສົ່ງມອບສິນຄ້າບໍ່ໄປ ຕາມກຳນົດເວລາ ທີ່ກຳນົດໄວ້ໃນຂໍ້ທີ 5. ຜູ້ຈັດຊື້ ມີສິດໃນການຫັກເງິນ ເປັນຈຳນວນ 0,05% ຕໍ່ວັນທີ່ຊັກ ຊ້າຈາກມູນຄ່າສັນຍາ ແລະ ຈະຫລຸດລົງສູງສຸດຮອດ 10% ຂອງມູນຄ່າສັນຍາ, ຫລັງຈາກນັ້ນ ຜູ້ຈັດຊື້ອາດ ຈະພິຈາລະນາຍົກເລີກສັນຍາສະບັບນີ້.

8. **ການຫຸ້ມຫໍ່:** ຜູ້ສະໜອງສິນຄ້າ ຕ້ອງຮັບປະກັນວ່າ ສິນຄ້າດັ່ງກ່າວ ຕ້ອງໄດ້ບັນຈຸ ແລະ ຫຸ້ມຫໍ່ໃຫ້ດີ ເພື່ອຮັບ-ປະກັນ ບໍ່ໃຫ້ມີການເປ່ເພ ແລະເສັຍຫາຍໃນການຂົນສົ່ງຮອດສະຖານທີ່ສົ່ງມອບ.

9. **ການກວດກາ:** ພາຍໃນສາມ(03) ວັນທີ່ໄດ້ສົ່ງມອບແລ້ວ, ຜູ້ຈັດຊື້ ຕ້ອງໄດ້ກວດກາສິນຄ້າທີ່ໄດ້ສົ່ງມາຮອດ ແລ້ວ ຫລື ປະຕິເສດ ແລະ ບໍ່ຍອມຮັບຮອງເອົາສິນຄ້ານັ້ນ, ຖ້າຫາກວ່າ ສິນຄ້ານັ້ນ ບໍ່ຖືກຕ້ອງຕາມ ມາດຕະຖານ ເຕັກນິກທີ່ຕ້ອງການ. ການຈ່າຍເງິນຄ່າສິນຄ້າຕາມສັນຍາສະບັບນີ້ ຈະບໍ່ຈ່າຍໃຫ້ ແລະ ບໍ່ອອກ ໜັງສື ຢັ້ງຢືນຮັບຮອງເອົາສິນຄ້ານັ້ນ.

10. **ການລະເມີດລິຂະສິດ:** ຜູ້ສະໜອງສິນຄ້າຕ້ອງຮັບປະກັນການນຳໃຊ້ສິນຄ້າທີ່ສະໜອງໃຫ້ຜູ້ຈັດຊື້ ພາຍໃຕ້ ສັນຍາສະບັບນີ້ ບໍ່ໄດ້ລະເມີດຕໍ່ສິດທິບັດ, ຮູບແບບ, ຊື່ການຄ້າ ແລະຍີ່ຫໍ້. ນອກຈາກນີ້, ຜູ້ສະໜອງສິນຄ້າ ຕ້ອງໄດ້ຮັບ ຜິດຊອບຕໍ່ການຮັບປະກັນ, ການທົດແທນຄ່າເສັຍຫາຍ, ການປ້ອງກັນ ແລະ ປົກປ້ອງຕໍ່ຜູ້ຈັດຊື້ ບໍ່ໃຫ້ຕົກຢູ່ທ່າຮັບຈາກທຸກໆການກະທຳ ຫລື ການຮຽກຮ້ອງ ຕໍ່ຜູ້ຈັດຊື້ ທີ່ພົວພັນກັບການລະເມີດຕໍ່ສິດທິ ບັດ, ຮູບແບບ, ຊື່ການຄ້າ ແລະ ຍີ່ຫໍ້ທີ່ເກີດຂຶ້ນຈາກສິນຄ້າ ທີ່ສະໜອງໃຫ້ພາຍໃຕ້ສັນຍາສະບັບນີ້.

11. **ການຮັບປະກັນ:** ຜູ້ສະໜອງສິນຄ້າຕ້ອງຮັບປະກັນຕາມທີ່ກຳນົດ ໄວ້ຢູ່ໃນເອກະສານສົມທຽບລາຄາ ຫມວດ ທີ 4, ສຳລັບສິນຄ້າທີ່ສະ ໜອງໃຫ້ຕາມສັນຍາສະບັບນີ້ ຕ້ອງແມ່ນເຄື່ອງໃຫມ່ ແລະຍັງ ບໍ່ທັນໄດ້ ນຳໃຊ້ ເທື່ອ. ຜູ້ສະໜອງສິນຄ້າຕ້ອງຮັບປະກັນ ຕາມທີ່ໄດ້ ກຳນົດໄວ້ຢູ່ໃນ ເອກະສານປະມູນ ຫລືການ ສະເໜີລາ ຄາ. ຖ້າຫາກວ່າ ສິນຄ້າທີ່ສະໜອງໃຫ້ນັ້ນຫາກເປ່ເພຢູ່ໃນໄລຍະການຮັບປະກັນ ຫລື ໃນເວລາ

ນຳສົ່ງ/ຕິດຕັ້ງ. ຫາກສິນຄ້າດັ່ງກ່າວນັ້ນນຳໃຊ້ບໍ່ໄດ້, ຜູ້ສະໜອງສິນຄ້າ ຕ້ອງໄດ້ຮັບຜິດຊອບ ຕໍ່ການເປ່ເພ ຫລື ປ່ຽນແທນໃຫ້ໃຫມ່ ພາຍໃນ(10)ວັນ.

12. **ການຍົກເລີກສັນຍາ:** ຜູ້ຈັດຊື້ສາມາດຍົກເລີກສັນຍາທັງຫມົດ ຫລື ບາງສ່ວນໄດ້ໃນທຸກໆເວລາ ໂດຍຈະແຈ້ງເປັນລາຍລັກອັກສອນ ຫາຜູ້ສະໜອງສິນຄ້າ, ຖ້າຫາກວ່າເກີດເຫດການ ດັ່ງນີ້:

ກ. ຖ້າຫາກວ່າຜູ້ສະໜອງສິນຄ້າບໍ່ສົ່ງສິນຄ້າຄົບຖ້ວນ ຫລື ບໍ່ສົ່ງຕາມກຳນົດເວລາທີ່ໄດ້ລະບຸໄວ້ຢູ່ໃນສັນຍາ;

ຂ. ຖ້າຫາກວ່າຜູ້ສະໜອງສິນຄ້າບໍ່ປະຕິບັດຕາມ ຄວາມຮັບຜິດຊອບ ໃນພັນທະຂອງຕົນ ຕາມສັນຍາສະບັບນີ້;

ຄ. ຖ້າຫາກວ່າມີເຫດການໃດຫນຶ່ງເກີດຂຶ້ນ. ຜູ້ສະໜອງສິນຄ້າ ບໍ່ໄດ້ມີການແກ້ໄຂໃດໆ ພາຍໃນໄລຍະ 3 (ສາມ) ວັນ, ຫລັງຈາກ ທີ່ໄດ້ຮັບແຈ້ງການການກະທຳຜິດຈາກຜູ້ຈັດຊື້ ແລະ ໄດ້ລະບຸການກະທຳຜິດນັ້ນ;

ງ. ຖ້າຫາກວ່າຜູ້ຈັດຊື້ຫາກຮູ້ເຫັນໄດ້ວ່າ ຜູ້ສະໜອງສິນຄ້າ ມີເຈດຕະນາສໍ້ໂກງ ແລະ ມີພຶດຕິກຳສໍ້ລາດບັງຫລວງ ໃນການແຂ່ງຂັນ ຫລື ໃຊ້ອຳນາດບີບບັງຄັບໃຫ້ເຊັນສັນຍາສະບັບນີ້.

13. **ການແກ້ໄຂຂໍ້ຂັດແຍ່ງ:** ຖ້າຫາກວ່າເກີດມີຂໍ້ຂັດແຍ່ງທີ່ເກີດຂຶ້ນລະຫວ່າງສອງຝ່າຍທີ່ຜິດພັນ ກັບເນື້ອໃນຂອງສັນຍາສະບັບນີ້, ແຕ່ລະຝ່າຍຕ້ອງໄດ້ແກ້ໄຂຂໍ້ ຂັດແຍ່ງດັ່ງກ່າວນີ້ ໂດຍຜ່ານການປຶກສາຫາລືກັນ ຫລາຍຝ່າຍ ແລະ ຮ່ວມມືຊຶ່ງກັນ ແລະກັນ.

ຖ້າຫາກວ່າແຕ່ລະຝ່າຍຍັງບໍ່ພໍໃຈໃນການແກ້ໄຂຂໍ້ຂັດແຍ່ງ, ວິທີການແກ້ໄຂຂໍ້ຂັດແຍ່ງ ແມ່ນຈະດຳເນີນການດ້ວຍການໄກ່ເກ່ຍ ໂດຍຜູ້ໄກ່ເກ່ຍ ທີ່ໄດ້ຮັບການແຕ່ງຕັ້ງເຫັນດີຈາກຫລາຍຝ່າຍ ແລະ ການຕັດສິນຂອງຜູ້ໄກ່ເກ່ຍຕ້ອງເປັນທີ່ຍອມຮັບໄດ້ໂດຍທຸກໆຝ່າຍ.

ຫມວດທີ 4*:* **ແບບຟອມຍື່ນສະເຫນີລາຄາ**

ໂລໂກ/ຊື່ບໍລິສັດ
ທີ່ຢູ່ :
ວັນທີ:
ເຖິງ: (ຊື່ ແລະ ທີ່ຢູ່ຂອງຜູ້ຈັດຊື້)

ຮຽນ: ທ່ານ.....ທີ່ນັບຖື,

- ອີງຕາມຫນັງສືເຊີນເຂົ້າຮ່ວມສະເຫນີລາຄາ, ສະບັບເລກທີ .....ລົງວັນທີ:.....

ຂ້າພະເຈົ້າໄດ້ສຶກສາເອກະສານປະມູນສົມທຽບລາຄາໂດຍໄດ້ຮັບຮູ້ ແລະເຂົ້າໃຈຢ່າງລະອຽດຖີ່ຖ້ວແລ້ວ,ຈຶ່ງຂໍຢັ້ງຢືນດ້ວຍກຽດເພື່ອສະໜອງ (ຊື່ຂອງສິນຄ້າ) ຕາມຄວາມຕ້ອງ ການທີ່ກຳນົດໄວ້ຢູ່ໃນ ເອກະສານ ປະມູນ ສົມທຽບລາຄາ ເປັນລາຄາ ລວມທັງຫມົດ:

- ..... (ຂຽນເປັນຕົວເລກ) .....ກີບ.
- ..... (ຂຽນເປັນຕົວໜັງສື) .....ກີບ.

ຖ້າຫາກວ່າ ການສະເໜີລາຄາຂອງຂ້າພະເຈົ້າໄດ້ຖືກຮັບຮອງເອົາ, ຂ້າພະເຈົ້າຮັບປະກັນວ່າ ຈະສົ່ງມອບສິນຄ້າດັ່ງກ່າວນີ້ ພາຍໃນ (ຈຳນວນ ເດືອນ, ອາທິດ, ວັນ) ໂດຍເລີ້ມຈາກວັນທີ່ໄດ້ຮັບແຈ້ງການ ຂອງທ່ານ, ໂດຍສອດຄ່ອງ ກັບເວລາສົ່ງມອບສິນຄ້າທີ່ກຳນົດໄວ້ຢູ່ໃນຂໍ້ທີ 5 ຂອງ ເງື່ອນໄຂສັນຍາ.

ຂ້າພະເຈົ້າຂໍຢັ້ງຢືນວ່າບໍ່ໄດ້ຍື່ນເອກະສານສົມທຽບລາຄາໃນການສົມທຽບລາຄານີ້ ຫລາຍກວ່າຫນຶ່ງຊອງ ສຳລັບການສົມທຽບລາຄານີ້. ເອກະສານສົມທຽບລາຄາຂອງຂ້າພະເຈົ້າ ມີຜົນໃຊ້ໄດ້ຕາມໄລຍະເວລາ (ຈຳນວນ)ວັນ ຫລັງຈາກເວລາປິດຮັບຊອງສົມທຽບລາຄາ.

ຂ້າພະເຈົ້າຂໍແຈ້ງວ່າ ບໍລິສັດຂອງຂ້າພະເຈົ້າ ແລະຜູ້ສະໜອງສິນຄ້າໃນບາງສ່ວນຂອງສັນຍານີ້ ບໍ່ແມ່ນຜູ້ທີ່ ລັດຖະບານ ແລະ/ຫລື ທະນາຄານໂລກ, ທະນາຄານພັດທະນາອາຊີ ໄດ້ປະກາດເປັນ ບໍລິສັດທີ່ບໍ່ມີຄວາມ ເໝາະສົມ ໃນການກະທຳທີ່ພົວພັນກັບການ ສໍ້ລາດ ບັງຫລວງ, ການສໍ້ໂກງ, ການສົມຮູ້ຮ່ວມຄິດ ຫລື ການບີບບັງຄັບ. ຂ້າພະເຈົ້າ ຂໍໃຫ້ຄຳຫມັ້ນສັນຍາຕື່ມອີກວ່າ ຈະບໍ່ພົວພັນກັບການກະທຳດັ່ງກ່າວນີ້ ໃນ ຕະຫລອດໄລຍະ ປະຕິບັດສັນຍາສະບັບນີ້.

ຂ້າພະເຈົ້າຮັບຮູ້ວ່າແຈ້ງການຂອງທ່ານ ຈະປະກອບເປັນ ການຮັບ ຮອງເອົາການສົມທຽບລາຄາ ຂອງ ຂ້າພະເຈົ້າ ແລະຖືວ່າເປັນຂໍ້ຜູກມັດລະ ຫວ່າງພວກເຮົາ ຈົນກວ່າຈະໄດ້ເຊັນສັນຍາ.

ຂ້າພະເຈົ້າເຫັນດີເຫັນພ້ອມວ່າທ່ານບໍ່ມີຄວາມຈຳເປັນທີ່ຈະຕ້ອງຮັບຮອງເອົາຊອງສົມທຽບລາຄາທີ່ສະເໜີ ລາຄາຕ່ຳທີ່ສຸດ ຫລື ທຸກໆ ຊອງປະມູນທີ່ທ່ານໄດ້ຮັບ.

ລາຍເຊັນຂອງຜູ້ທີ່ໄດ້ຮັບອະນຸມັດໃຫ້ເຊັນເອກະສານປະມູນນີ້
ຊື່ ແລະ ຕຳແໜ່ງຂອງເຈົ້າຂອງລາຍເຊັນ

ໝວດທີ 5: ລາຍການສິນຄ້າ ແລະ ການສະເໜີລາຄາ

ລ/ດ	ຊື່ຂອງສິນຄ້າ ແລະ ລາຍລະອຽດ ຂອງສິນຄ້າ	ຫົວ ໜ່ວຍ	ຈຳນວນ (1)	ລາຄາຫົວໜ່ວຍ ທີ່ລວມພາສີ,ອາກອນຕ່າງໆ, ຄ່າຂົນສົ່ງຮອດສະຖານທີ່ ແລະ ຕິດຕັ້ງ (ກີບ) (2)	ລາຄາລວມ (ກີບ) (3)= (1) X (2)
1.1	Laptop	ຊຸດ	2		
1.2	Laptop	ຊຸດ	3		
2	LCD projector	ຊຸດ	2		
3	Black and white Printer	ຊຸດ	1		
4.1	Digital conference system (Digital chairman discussion unit)	ຊຸດ	1		
4.2	Digital conference system (Digital delegate discussion unit)	ຊຸດ	10		
4.3	Digital conference system (Control Unit)	ຊຸດ	1		
5	Motorized projection screen	ຊຸດ	1		
				ລາຄາລວມທັງໝົດ	

ລາຄາລວມຂຽນເປັນຕົວໜັງສື	
ສະເໜີສົ່ງມອບ	(ຈຳນວນ ວັນ, ເດືອນ)
ການຮັບປະກັນ	(ຈຳນວນ ວັນ, ເດືອນ)

ວັນທີ:
ລາຍເຊັນ ແລະ ຈ້ຳກາຂອງຜູ້ສະໜອງສິນຄ້າ

ໝວດທີ 6: ມາດຕະຖານເຕັກນິກ:

ລ/ດ	ເລກລະຫັດ ຫລື ລາຍການສິນຄ້າ	ມາດຕະຖານເຕັກນິກ ຂອງສິນຄ້າທີ່ຕ້ອງການ	ມາດຕະຖານເຕັກນິກ ຂອງສິນຄ້າ ທີ່ສະເໜີໂດຍຜູ້ສະໜອງສິນຄ້າ
1.1	**Laptop**		
	Make		
	Model		
	Screen	15 inch	
	Intel processor	core i7-6700HQ, quad core 2.6 GHz(3.5GHz boost)	
	Memory	16 GB DDR4 2400Mhz (2 x DIMMs)	
	Storage	256 GB M.2 SSD+ 1TB 5200 rpm HDD	
	Connectivity	802.11ac Dual-Band Wi-Fi & Bluetooth 4.1	
	Port	USB 3.0 / HDMI / Mini-Display Port	
	Extras	Multi-colored backlit keyboard, track pad, HD webcam	
	OPS	Windows 10	
	Accessories	Supply with wireless mouse, mouse pad and carry bag	
	Warranty	1 year minimum	
1.2	**Laptop**		
	Make		
	Model		
	Screen	14 inch	
	Intel processor	core i7 (2.50 GHz up to 3.50 GHz)	
	Memory	8 GB DDR3	
	Storage	1TB 5400 rpm	
	Connectivity	802.11ac Dual-Band Wi-Fi & Bluetooth 4.1	
	Port	2 USB 3.0 / HDMI / Mini-Display Port	
	Multimedia	Built-in speaker, built-in subwoofer	
	Web camera	Webcam with integrated digital microphone	
	OPS	Windows 10	
	Accessories	Supply with wireless mouse,	

		mouse pad and carry bag	
	Warranty	1 year minimum	
2	LCD projector		
	Make		
	Model		
	Technology	3 LCD	
	Brightness	3,000	
	Contrast Ratio	2000:1	
	Resolution	1280x800(WXGA)	
	Aspect Ratio:	16:10	
	Lamp Life (STD/ECO)(hr)	Type 200W UHE Life (Normal/Eco) 5,000 hours / 10,000 hours	
	Accessories	Supply with carry bag	
	Warranty	1 year minimum	
3	**Black and white Printer**		
	Make		
	Model		
	Technology	Laser	
	Print speed	Simplex: up to 25 ppm Duplex: up to 7 spm	
	Print Resolution	600 x 600dpi	
	Print Quality	1200 x 1200dpi	
	USB Interface	USB 2.0 High Speed	
	Network Interface	10 Base T / 100 Base Tx	
	Warranty	1 year minimum	
4.1	**Digital conference system** (**Digital chairman discussion unit)**		
	Make		
	Model		
	Power Supply	DC 9V by Control unit	
	Interface Type	8P-DIN	
	Earphone Output	3.5mm stereo jack	
	Microphone Type	Condenser	
	Signal-to-Noise Ratio	68dB(A-Wieght)	
	Warranty	1 year minimum	
4.2	**Digital conference system** (**Digital delegate discussion unit)**		
	Make		
	Model		
	Power Supply	DC 9V by Control unit	
	Interface Type	8P-DIN	
	Earphone Output	3.5mm stereo jack	
	Microphone Type	Condenser	
	Signal-to-Noise Ratio	68dB(A-Wieght)	
	Warranty	1 year minimum	
4.3	**Digital conference system** (**Controls unit)**		

	Make		
	Model		
	Power Supply	AC 100-240V	
	Frequency response	30Hz-18kHz	
	Input impedance	LINE:50KΩ DIN:50KΩ	
	Output impedance	RECORD :200Ω LINE :200Ω BALANCE: 300Ω UNBALANCE: 400Ω	
	Warranty	1 year minimum	
5	**Motorized projection screen**		
	Style	Electric	
	Type	Motorized screen	
	Material	Matt White	
	Size	213cm x 274cm (H x W)	
	Accessories	Supply with wireless remote control	
	Warranty	1 year minimum	

ວັນທີ:
ລາຍເຊັນ ແລະ ຈ້ຳກາຊື່ ແລະນາມສະກຸນ

ໝວດທີ 7: ຕາຕະລາງການສົ່ງມອບສິນຄ້າ

ລ/ດ	ເນື້ອໃນຂອງລາຍການ	ຫົວໜ່ວຍ	ຈຳນວນທີ່ຕ້ອງການ	ບ່ອນສົ່ງມອບ	ວັນທີທີ່ຕ້ອງການ (ມື້/ອາທິດ)
1.1	Laptop	ຊຸດ	2	ຫ້ອງການກອງທຶນປົກປັກຮັກສາສິ່ງແວດລ້ອມ, ເຂດນາໄຮ່ດຽວ, ຕຶກ ກ ຊສ 100, ຊັ້ນ 2, ນະຄອນຫຼວງວຽງຈັນ, ໂທ : 021 252 739, ແຟກ: 021 252 741	
1.2	Laptop	ຊຸດ	3		
2	LCD projector	ຊຸດ	2		
3	Printer	ຊຸດ	1		
4.1	Digital conference system (Digital chairman discussion unit)	ຊຸດ	1		
4.2	Digital conference system (Digital delegate discussion unit)	ຊຸດ	1		
4.3	Digital conference system (Controls unit)	ຊຸດ	1		
5	Motorized projection screen	ຊຸດ	1		

ລາຍເຊັນຜູ້ສະໜອງສິນຄ້າ ແລະ ຈ້ຳກາ

ຊື່ ແລະ ນາມສະກຸນ

ໝວດທີ 8: ຮຸບຕົວຢ່າງສິນຄ້າ

ຜູ້ສະໜອງສິນຄ້າ ຕ້ອງລະບຸຍີ່ຫໍ້/ໂມແດນ (ທີ່ຮັບຮອງໄດ້) ຂອງສິນຄ້າທີ່ສະໜອງ ແລະຕ້ອງຄັດຕິດ ຕົ້ນສະບັບ ຂອງສິ່ງພິມ ໂຄສະນາຂອງສິນຄ້າ/ภาตาลอกแต่ละลายภาม.(ถ้าหากว่าต้องภาม)

ໝວດທີ 9: ສັນຍາ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ສັນຍາ

ສັນຍາເລກທີ:

ສັນຍາສະບັບນີ້ ໄດ້ສ້າງຂຶ້ນໃນວັນທີ..... ລະຫວ່າງ ຝ່າຍໜຶ່ງ ຫ້ອງການ ກອງທຶນປົກປັກຮັກສາ ສິ່ງແວດລ້ອມ, ເຂດນາໄຮ່ດຽວ ຕຶກ ກຊສ 100, ຊັ້ນ 2, ນະຄອນຫຼວງວຽງຈັນ, ໂທລະສັບ: 021 252739 ແຟັກ: 021 252741 (ຕໍ່ໄປນີ້ເອີ້ນວ່າ ຜູ້ຈັດຊື້) ແລະ ອີກຝ່າຍໜຶ່ງ (ຊື່ ແລະ ທີ່ຢູ່ບໍລິສັດ .....(ຕໍ່ໄປນີ້ເອີ້ນວ່າ ຜູ້ສະໜອງສິນຄ້າ). ພ້ອມດຽວກັນນີ້ຜູ້ຈັດຊື້ໄດ້ສະເໜີຕົກລົງ ໃຫ້ຜູ້ ສະໜອງສິນຄ້າ ສະໜອງ (ຊື່ຂອງສິນຄ້າ) ແລະ ຜູ້ຈັດຊື້ ໄດ້ຮັບຮອງເອົາການສົມທຽບລາຄາຂອງຜູ້ ສະໜອງສິນຄ້າ ໃນການສະໜອງສິນຄ້າດັ່ງກ່າວ ໃນມູນຄ່າລວມ ທັງໝົດ (ລາຄາເປັນຕົວເລກ ແລະ ຕົວ ໜັງສື) (ຕໍ່ໄປນີ້ເອີ້ນ ວ່າ: ມູນຄ່າສັນຍາ).

1. ບັນດາເອກະສານທີ່ປະກອບເປັນສັນຍາໄດ້ຈັດລຽງ ຕາມລະດັບ ຄວາມສຳຄັນ ດັ່ງນີ້:

(ກ). ສັນຍາສະບັບນີ້ ທີ່ໄດ້ເຊັນກັນລະຫວ່າງສອງຝ່າຍ.

(ຂ). ເງື່ອນໄຂຂອງສັນຍາ.

(ຄ). ຕາຕະລາງລາຍການສິນຄ້າ ແລະ ລາຄາ.

(ງ). ມາດຕະຖານເຕັກນິກຂອງສິນຄ້າທີ່ຈະສະໜອງໃຫ້.

(ຈ). ຕາຕະລາງການສົ່ງມອບສິນຄ້າ.

2. ຜູ້ຈັດຊື້ ເຫັນດີພິຈາລະນາຈ່າຍເງິນໃຫ້ແກ່ຜູ້ສະໜອງສິນຄ້າຕາມ ທີ່ໄດ້ກຳນົດໄວ້ຢູ່ໃນຂໍ້ 5 ຂອງເງື່ອນໄຂ ຂອງສັນຍາ. ພ້ອມດຽວກັນນີ້, ຜູ້ສະໜອງສິນຄ້າໄດ້ຕົກລົງເຫັນດີກັບຜູ້ຈັດຊື້ ຕ້ອງສະໜອງ ສິນຄ້າ ແລະ ໄດ້ດັດແປງແກ້ໄຂຄວາມເສັຽຫາຍທຸກໆຢ່າງທີ່ມີ ໃຫ້ຖືກຕ້ອງ ຕາມ ທຸກໆຂໍ້ກຳນົດ ຂອງສັນຍາ ສະບັບນີ້.

3. ພ້ອມດຽວກັນນີ້, ຜູ້ຈັດຊື້ ໄດ້ຕົກລົງເຫັນດີວ່າ ຕ້ອງຈ່າຍເງິນ ໃຫ້ແກ່ຜູ້ສະໜອງສິນຄ້າ ຕາມການພິຈາລະນາ ຢັ້ງຢືນຕາມຂໍ້ກຳນົດ ຂອງສິນຄ້າ ແລະໄດ້ດັດແປງແກ້ໄຂຄວາມ ເສັຽຫາຍທຸກໆຢ່າງທີ່ມີໃນ ມູນຄ່າ ຂອງສັນຍາ ຫລືຈຳນວນເງິນອື່ນໆທີ່ຕ້ອງໄດ້ຊຳລະ ພາຍໃຕ້ ຂໍ້ກຳນົດຂອງສັນຍາຕາມເວລາ ແລະ ວິທີການທີ່ ໄດ້ກຳນົດ ໄວ້ຢູ່ໃນ ຂໍ້ທີ 5 ຂອງເງື່ອນໄຂສັນຍາ.

ສະນັ້ນ, ເພື່ອເປັນຫລັກຖານແກ່ທັງສອງຝ່າຍ, ຈຶ່ງໄດ້ຕົກລົງປະ ຕິບັດ ສັນຍາສະບັບນີ້ ໂດຍສອດຄ່ອງກັບ ກົດໝາຍ ຂອງ ສປປ ລາວ ຕາມວັນທີ ທີ່ໄດ້ລະບຸໄວ້ຂ້າງເທິງນີ້ ເປັນຕົ້ນໄປ.

ຜູ້ສະໜອງສິນຄ້າ ຜູ້ຈັດຊື້

ຊື່ ແລະ ນາມສະກຸນ, ຕຳແໜ່ງ